ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY

ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 030 9882809,ແຟັກ: (856-21)

ເລກທີ: 041 /ລອທ

ນະຄອນຫຼວງວຽງຈັນ, 14 MAR 2023

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ ຈຳກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງການເຊັນຮັບຮອງບົດລາຍງານການເງິນປະຈຳປີ 2022.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.
- ອີງຕາມ ມະຕິຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປະຈຳປີ 2023, ເລກທີ 037/ລອທ, ລົງວັນທີ 11 ມີນາ 2023.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດແຈ້ງການເພີ່ມເຕີມກ່ຽວກັບມະຕິຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປະຈຳປີ 2023, ເລກທີ 037/ລອທ, ລົງວັນທີ 11 ມີນາ 2023 ຂໍ້ທີ 2 ເລື່ອງ ຮັບຮອງບົດລາຍງານການເງິນຂອງບໍລິສັດປະຈຳປີ 2022 ຈາກບໍລິສັດກວດສອບພາຍນອກແມ່ນຮັບຮອງບົນພື້ນຖານຫຼັກການ, ສ່ວນບົດລາຍງານການເງິນຂອງບໍລິສັດປະຈຳປີ 2022 ຈາກບໍລິສັດກວດສອບພາຍນອກສະບັບສົມບູນແບບພ້ອມລາຍລະອຽດປະກອບແມ່ນຈະໄດ້ມອບສິດ ແລະ ອຳນາດ ໃຫ້ທ່ານ ພົງຖານ ພິດຈຳນົງ - ຮອງຜູ້ອຳນວຍການ ແລະ ທ່ານ ວັນສະເຫຼີມ ສີສຸຄຳມັ່ງ - ຫົວໜ້າຝ່າຍບັນຊີ-ການເງິນ ເປັນຜູ້ມີສິດໜ້າທີ່ເຊັນບົດລາຍງານການເງິນປະຈຳປີ 2022 ເມື່ອເອກະສານດັ່ງກ່າວສຳເລັດ.

ດັ່ງນັ້ນ, ຈຶ່ງແຈ້ງຍັງທ່ານເພື່ອຮັບຊາບ

ດ້ວຍຄວາມນັບຖືເປັນຢ່າງສູງ

ຜູ້ອຳນວຍການໃຫຍ່

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ປອ. ເສດ ພັດທະນະມາດ